ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ສຳນັກງານ ຄຄຊ
ຮັບ
ເລກທີ 0353
ວັນທີ 02 APR 2018
ໂທລະສັບ 021 217770

ເລກທີ: 14 /ຫກ
ນະຄອນຫຼວງວຽງຈັນ, ວັນທີ: 30 ມີນາ 2018

# ບົດລາຍງານ

## ການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ
## ປະຈຳອາທິດທີ 12-16/03/2018 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

### I. ວຽກງານການເມືອງແນວຄິດ

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

### II. ການເຄື່ອນໄຫວວຽກງານວິຊາສະເພາະ

### 1. ສະພາບເສດຖະກິດເງິນຕາສາກົນ

#### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດອ່ອນຄ່າລົງ 0,15% ທຽບໃສ່ເອີໂຣ ເນື່ອງຈາກຕົວເລກທາງດ້ານເສດຖະກິດຂອງ ສະຫະລັດອາເມລິກາ ອອກມາບໍ່ດີ ເປັນຕົ້ນແມ່ນຈຳນວນເຮືອນທີ່ເລີ່ມກໍ່ສ້າງຂອງເດືອນ 02/2018 ຫຼຸດລົງ 7,0% ຈາກເພີ່ມຂຶ້ນ 9,7% ໃນເດືອນຜ່ານມາ ແລະ ຕົວເລກດັດຊະນີລາຄາຜູ້ບໍລິໂພກ ຂອງເດືອນ 02/2018 ເພີ່ມຂຶ້ນ 2,2% ຈາກເພີ່ມຂຶ້ນ 2,1% ໃນເດືອນຜ່ານມາ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 05-09/03/2018 | ອາທິດນີ້ 12-16/03/2018 | ເປີເຊັນ ແຂງຄ່າ(+) / ອ່ອນຄ່າ(–) |
|---|---|---|---|
| ໂດລາ/ເອີໂຣ | 1,2307 | 1,2325 | -0,15% |
| ເຢນ/ໂດລາ | 106,75 | 105,69 | 1,00% |
| ບາດ/ໂດລາ | 31,36 | 31,18 | 0,58% |
| ເປໂຊ/ໂດລາ | 52,06 | 51,92 | 0,28% |
| ຣູເປັຍ/ໂດລາ | 13.777,00 | 13.745,00 | 0,23% |
| ໂດລາສິງກະໂປ/ໂດລາ | 1,3184 | 1,3121 | 0,48% |
| ຢວນ/ໂດລາ | 6,3300 | 6,3222 | 0,12% |

#### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

- ລາຄານ້ຳມັນເພີ່ມຂຶ້ນ 1,80% ຈາກ 59,53 ໂດລາ/ບາເຣວ ມາເປັນ 60,60 ໂດລາ/ບາເຣວ ເນື່ອງຈາກຄັງສຳຮອງນ້ຳມັນແອັດຊັງຂອງ ສະຫະລັດອາເມລິກາ ຫຼຸດລົງ 6,27 ລ້ານບາເຣວ ຂອງອາທິດທີ 09/03/2018;

- ສຳລັບລາຄາຄຳເພີ່ມຂຶ້ນ 0,04% ຈາກ 1.319,36 ໂດລາ/ອອນ ມາເປັນ 1.319,91 ໂດລາ/ອອນ ເນື່ອງຈາກການອ່ອນຄ່າຂອງເງິນໂດລາ ເຮັດໃຫ້ນັກລົງທຶນຫຼຸດຜ່ອນການຖືຄອງເງິນໂດລາ, ແລ້ວຫັນເຂົ້າຊື້ຄຳ ແລະ ສັນຍາຊື້-ຂາຍຄຳ.

## 2. ສະພາບການຊື້-ຂາຍອັດຕາແລກປ່ຽນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,02% ແລະ ອ່ອນຄ່າລົງ 0,59% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າເງິນກີບແຂງຄ່າຂຶ້ນ 0,03% ທຽບໃສ່ສະກຸນເງິນໂດລາ ແຕ່ອ່ອນຄ່າລົງ 4,26% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 09/03/2018 | | | ອາທິດນີ້ 16/03/2018 | | | %ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະຄານ[1] | | | | | | | | | | | | |
| ໂດລາ | 8.300,96 | 8.323,73 | 8.308,54 | 8.324,99 | 8.324,49 | 8.310,43 | -0,05% | -0,01% | -0,02% | -0,04% | 0,03% | 0,03% |
| ບາດ | 264,95 | 266,52 | 265,95 | 266,66 | 267,86 | 267,54 | -0,64% | -0,50% | -0,59% | -4,36% | -4,15% | -4,26% |

### 2.2 ສະພາບຖານເງິນຕາແລະປະລິມານເງິນ M2

- ຖານເງິນຕາປະຈຳອາທິດນີ້ ຫຼຸດລົງ 0,13% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 9,44%;
- ປະລິມານເງິນ M2 ເພີ່ມຂຶ້ນ 0,06% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 9,68%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດ (09-15/03/2018) ເຫັນວ່າ ທທກ ຊື້ໂດລາສຸດທິ 9,04 ລ້ານໂດລາ (ໃນນີ້ຊື້ໂດລາໄດ້ 40,57 ລ້ານໂດລາ ແລະ ຂາຍໂດລາໄດ້ 31,53 ລ້ານໂດລາ) ແຕ່ຂາຍເງິນບາດສຸດທິ 374,50 ລ້ານບາດ (ໃນນີ້ຊື້ບາດໄດ້ 257,84 ລ້ານບາດ ແລະ ຂາຍບາດໄດ້ 632,34 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາ ເຫັນວ່າເງິນໂດລາເພີ່ມຂຶ້ນ 31,14% ແລະ ເງິນບາດເພີ່ມຂຶ້ນ 30,71%;
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍເງິນໂດລາໃຫ້ທະນາຄານທຸລະກິດ ຈຳນວນ 13,43 ລ້ານໂດລາ ແລະ ຂາຍເງິນບາດໃຫ້ທະນາຄານທຸລະກິດ ຈຳນວນ 51,00 ລ້ານບາດ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ມີປະລິມານຊື້-ຂາຍເງິນໂດລາ ຈຳນວນ 8,63 ລ້ານໂດລາ ແລະ ເງິນບາດ ຈຳນວນ 135,30 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບພາກສ່ວນອື່ນໆ ໃນອາທິດນີ້ເຫັນວ່າ: ບໍ່ມີການຊື້-ຂາຍເງິນໂລດາ ແລະ ເງິນບາດ.

1% ການປ່ຽນແປງຂອງອັດຕາແລກປ່ຽນທະນາຄານທຸລະກິດ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ

ສະພາບການຊື້-ຂາຍເງິນຕາຕ່າງປະເທດ (ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 02-13/03/2018 | | ອາທິດນີ້ 09-15/03/2018 | | (%) +ເພີ່ມຂຶ້ນ/-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| 1. ການຊື້ເງິນຕາຕ່າງປະເທດ | **28,01** | **214,45** | **40,57** | **257,84** | **44,84%** | **20,23%** |
| - ທ/ຄທຸລະກິດລັດ | 12,08 | 79,10 | 12,13 | 103,82 | 0,41% | 31,25% |
| - ທ/ຄທຸລະກິດອື່ນໆ | 15,93 | 135,35 | 28,44 | 154,02 | 78,53% | 13,79% |
| 2, ການຂາຍເງິນຕາຕ່າງປະເທດ | **26,97** | **466,61** | **31,53** | **632,34** | **16,91%** | **35,52%** |
| - ທ/ຄທຸລະກິດລັດ | 8,18 | 90,65 | 13,43 | 146,98 | 64,18% | 62,14% |
| - ທ/ຄທຸລະກິດອື່ນໆ | 18,79 | 375,96 | 18,10 | 485,36 | -3,67% | 29,10% |
| ຊື້-ຂາຍສຸດທິທທກ | **1,04** | **-252,16** | **9,04** | **-374,50** | **769,23%** | **48,52%** |
| - ຜົດຕ່າງຊື້-ຂາຍ | 3,71% | -117,58% | 22,28% | -145,25% | 500,13% | 23,52% |
| - ມູນຄ່າການຊື້-ຂາຍ | **54,98** | **681,06** | **72,10** | **890,18** | **31,14%** | **30,71%** |
| 3,ການຊື້-ຂາຍລະຫວ່າງທຫລກັບ ທທກ | **-8,85** | **-12,00** | **-13,43** | **-51,00** | | |
| - ທຫລຊື້ຈາກທທກ | 0,00 | 0,00 | 0,00 | 0,00 | | |
| - ທຫລຂາຍໃຫ້ທທກ | 8,89 | 12,00 | 13,43 | 51,00 | | |
| 4,ຊື້-ຂາຍລະຫວ່າງທທກດ້ວຍກັນ | **3,60** | **95,24** | **8,63** | **135,30** | | |
| 5,ທຫລກັບ ພາກສ່ວນອື່ນໆ | **0,00** | **0,00** | **0,00** | **0,00** | | |
| -ທຫລຊື້ຈາກພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |
| -ທຫລຂາຍໃຫ້ພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |

**2.4 ສະພາບອັດຕາເງິນເຟີ້**

ອັດຕາເງິນເຟີ້ໃນເດືອນ 03/2018 ຄາດວ່າຈະຢູ່ໃນລະດັບ 1,28% (ຕົວເລກຄາດຄະເນ),

**2,5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ**

ທະນາຄານແຫ່ງ ສປປ ລາວ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເຂົ້າເງິນຕາຕ່າງປະເທດໃນອາທິດນີ້ເພີ່ມຂຶ້ນ 5,90% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 75,18 ລ້ານໂດລາສະຫະລັດທຽບເທົ່າ, ໃນນັ້ນ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ເພີ່ມຂຶ້ນ 719% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 233,22 ລ້ານໂດລາສະຫະລັດທຽບເທົ່າ,

**3. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ**

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ຈຳນວນ 720 ສະບັບ ທຽບໃສ່ອາທິດຜ່ານມາ ຫຼຸດລົງ 02 ສະບັບ ເທົ່າກັບ 0,27% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 295,53 ຕື້ກີບ ທຽບໃສ່ອາທິດຜ່ານມາຫຼຸດລົງ 101,19 ຕື້ກີບ ເທົ່າກັບ 25,51%.

- ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (09-15/03/2018) ມີທັງໝົດ 3,975 ຄັ້ງ ເຊິ່ງປະກອບມີດັ່ງນີ້:

- **ສະກຸນເງິນກີບ**: ມີການເຄື່ອນໄຫວຈຳນວນ 3,887 ຄັ້ງ, ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າຫຼຸດລົງ ຈຳນວນ 603,61 ຕື້ກີບ ຈາກ 1.587,12 ຕື້ກີບ ມາເປັນ 983,51 ຕື້ກີບ ເທົ່າກັບ 38,03%;
- **ກະຊວງການເງິນ**: ມີການເຄື່ອນໄຫວຈຳນວນ 88 ຄັ້ງ, ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າຫຼຸດລົງ ຈຳນວນ 386,68 ຕື້ກີບ ຈາກ 393,58 ຕື້ກີບ ມາເປັນ 6,90 ຕື້ກີບ ເທົ່າກັບ 98,24%;

4. <u>ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ,</u>

ດັດຊະນີຕະຫຼາດຫຼັກຊັບລາວໃນອາທິດນີ້ປິດຢູ່ທີ່ 902,38 ຈຸດ ຫຼຸດລົງ ຈາກ 912,78 ຈຸດ ຫຼື ເທົ່າກັບ 1,14% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດນີ້ ມີປະລິມານຊື້-ຂາຍຮຸ້ນທັງໝົດ 337.800 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,68 ຕື້ກີບ ຫຼຸດລົງ 70,56% ທຽບໃສ່ອາທິດຜ່ານມາ, ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 38,88% ຂອງມູນຄ່າການຊື້-ຂາຍທັງໝົດ,

➢ <u>ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)</u> (ຫົວໜ່ວຍມູນຄ່າ 1,000 ກີບ)

| ບໍລິສັດ | ອາທິດກ່ອນ | | | ອາທິດນີ້ | | | %ປ່ຽນແປງ | | | |
|---|---|---|---|---|---|---|---|---|---|---|
| | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ | ຈຳນວນ | ມູນຄ່າການຊື້-ຂາຍ | ລາຄາປ່ຽນແປງ (ກີບ) | ລາຄາປ່ຽນແປງ (%) |
| **BCEL** | 26.800 | 152.840.000 | 5.700 | **181.400** | **1.034.005.000** | **5.800** | 576,87 | 576,53 | 100 | 1,75 |
| **EDL-GEN** | 71.400 | 315.075.000 | 4.400 | **148.600** | **630.140.000** | **4.300** | 108,12 | 100,00 | -100 | -2,27 |
| **LWPC** | 1.301.200 | 5.205.210.000 | 4.000 | **3.300** | **13.200.000** | **4.000** | -99,75 | -99,75 | - | 0,00 |
| **PTL** | 1.200 | 1.920.000 | 1.600 | **4.300** | **6.065.000** | **1.700** | 258,33 | 215,89 | 100 | 6,25 |
| **SVN** | 300 | 870.000 | 2.900 | - | - | **2.900** | -100,00 | -100,00 | - | 0,00 |
| **PCD** | 100 | 140.000 | 1.400 | - | - | **1.400** | -100,00 | -100,00 | - | 0,00 |
| **LCC** | 17.100 | 43.015.000 | 2.500 | **200** | **515.000** | **2.600** | -98,83 | -98,80 | 100 | 4,00 |
| ທັງໝົດ | 1.418.100 | 5.719.070.000 | | **337.800** | **1.683.925.000** | | -76,18 | -70,56 | | |

5. <u>ວຽກງານອື່ນໆທີ່ພົ້ນເດັ່ນ.</u>

- ສຳເລັດການເຂົ້າຮ່ວມກອງປະຊຸມ ແລະ ຈັດກອງປະຊຸມຕ່າງໆ: ❶ ກອງປະຊຸມນາຍົກ-ຮອງນາຍົກລັດຖະມົນຕີ ປະຈຳເດືອນ ມີນາ 2018 ທີ່ (ຫສນຍ), ❷ ກອງປະຊຸມສະພາບໍລິຫານ ທະນາຄານພັດທະນາລາວ ທີ່ (ທພລ), ❸ ກອງປະຊຸມຄະນະກຳມະການແຫ່ງຊາດ ເພື່ອຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະໄໝສາມັນຄັ້ງທີ I ປະຈຳປີ 2018 ທີ່ (ທຫລ), ❹ ກອງປະຊຸມສະຫຼຸບຕີລາຄາການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ 04 ຂອງໜ່ວຍພັກກົມຈັດຕັ້ງ ແລະພະນັກງານ ທີ່ (ທຫລ), ❺ ກອງປະຊຸມປຶກສາຫາລືຂອງຄະນະຮັບຜິດຊອບກະກຽມເນື້ອໃນສະເຫຼີມສະຫຼອງວັນສ້າງຕັ້ງ ທຫລ ຄົບຮອບ 50 ປີ ທີ່ (ທຫລ), ❻ ກອງປະຊຸມນຳສະເໜີຮ່າງກົດໝາຍວ່າດ້ວຍທະນາຄານທຸລະກິດ ສະບັບປັບປຸງ ທີ່ (ທຫລ), ❼ ກອງປະຊຸມປຶກສາຫາລືໃນການກະກຽມບັນດາເນື້ອໃນ ແລະ ຫົວຂໍ້ທີ່ລັດຖະບານຈະ ລາຍງານຕໍ່ກອງປະຊຸມສະພາແຫ່ງຊາດ ທີ່ (ຫສນຍ), ❽ ກອງປະຊຸມປຶກສາຫາລືກ່ຽວກັບການປັບປຸງສະພາບແວດລ້ອມໃນການດຳເນີນທຸລະກິດທີ່ຕິດພັນກັບຂະແໜງການທະນາຄານ ທີ່ (ທຫລ), ❾ ກອງປະຊຸມຄະນະເກັບກຳຂໍ້ມູນ ແລະ ຄົ້ນຄວ້າກ່ຽວກັບການສະເໜີໂອນສັນຍາເງິນກູ້ບ້ວງເກັບຊື້ໄມ້ ຂອງບໍລິສັດ ພົງຊັບທະວີ ກໍ່ສ້າງຂົວ-ທາງ ໄປໃຫ້ສະມາຄົມເຟີນິເຈີລາວ ທີ່ (ທຫລ) ແລະ ❿ ກອງປະຊຸມຄະນະຄົ້ນຄວ້ານະໂຍບາຍອັດຕາແລກປ່ຽນ ແລະ ຄຸ້ມຄອງເງິນຕາຕ່າງປະເທດ ທີ່ (ທຫລ).
- ສຳເລັດການຕ້ອນຮັບການເຂົ້າຢ້ຽມຂຳນັບຄະນະຜູ້ວ່າການຄື: ລັດຖະມົນຕີປະຈຳສຳນັກງານນາຍົກລັດຖະມົນຕີ ຈາກລາດຊະອານາຈັກໄທ ແລະ ❷ ປະທານສະພາກວດກາ ທະນາຄານແຫ່ງຊາດຈີນ ສຳນັກງານໃຫຍ່;

- ຈັດຕັ້ງພິທີຕ່າງໆເຊັ່ນ: ❶ ພິທີເລື່ອນມະຫາຊົນກ້າວໜ້າເປັນສະມາຊິກພັກສຳຮອງ ແລະ ຈາກສະມາຊິກພັກສຳຮອງເປັນສະມາຊິກພັກສົມບູນ ແລະ ພິທີຈັດຕັ້ງປະຖະກະຖາ ເນື່ອງໃນໂອກາດວັນແມ່ຍິງສາກົນ ປະຈຳປີ 2018 ທີ່ (ທຫລ).

III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນທີ່ໄດ້ກຳນົດໄວ້ໃນແຜນວຽກປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ; ສືບຕໍ່ຕິດຕາມການຈັດຕັ້ງປະຕິບັດນະໂຍບາຍອັດຕາດອກເບັ້ຍຂອງ ທຫລ ແລະ ການສ້າງໂປຼແກຼມຕິດຕາມນະໂຍບາຍດັ່ງກ່າວຢ່າງໃກ້ຊິດ;
- ສືບຕໍ່ຕິດຕາມ, ກວດກາ ແລະ ສັງລວມການຮັກສາລະດັບຖານະເງິນຕາຕ່າງປະເທດຂອງທະນາຄານທຸລະກິດທົ່ວລະບົບ;
- ກະກຽມຈັດກອງປະຊຸມ, ເຂົ້າຮ່ວມກອງປະຊຸມ ແລະ ພິທີຕ່າງໆ: ❶ ກອງປະຊຸມຜ່ານຮ່າງກົດໝາຍວ່າດ້ວຍທະນາຄານທຸລິດ ສະບັບປັບປຸງ ທີ່ (ທຫລ), ❷ ກອງປະຊຸມປຶກສາຫາລືວຽກງານອວ່າຍໜີ້ 3 ແຈ ທີ່ (ທຫລ), ❸ ກອງປະຊຸມຄະນະຄົ້ນຄວ້າປັບປຸງກົດໝາຍວ່າດ້ວຍ ທຫລ ທີ່ (ທຫລ), ❹ ກອງປະຊຸມສະພາບໍລິຫານ ສະຖາບັນການທະນາຄານ ທີ່ (ສທຄ), ❺ ກອງປະຊຸມຕີລາຄາການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຂອງໜ່ວຍພັກກົມກວດກາພາຍໃນ, ໜ່ວຍພັກ ສກໜ, ໜ່ວຍພັກ ໂຮງພິມ ແລະ ໜ່ວຍພັກກົມບໍລິການທະນາຄານ ແລະ ❻ ພິທີຖະແຫຼງຂ່າວການຮ່ວມມື ລະຫວ່າງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ແລະ ທະນາຄານທະນາຊາດກ່ຽວກັບການພັດທະນາລະບົບຊຳລະສະສາງ ລະຫວ່າງ ລາວ-ໄທ ຜ່ານລະບົບ QR Promptpay ທີ່ (ປະເທດໄທ);
- ທ່ານ ຜູ້ວ່າການພ້ອມດ້ວຍຄະນະກະກຽມເດີນທາງໄປເຄື່ອນໄຫວວຽກງານທາງລັດຖະການ ຢູ່ແຂວງຫົວພັນ;
- ກະກຽມເຂົ້າຮ່ວມວາງພວງມະລາອະດີດນາຍົກລັດຖະມົນຕີແຫ່ງ ສສ. ຫວຽດນາມ, ຢູ່ສະຖານທູດ ສສ. ຫວຽດນາມປະຈຳ ສປປ ລາວ;
- ກະກຽມການຕ້ອນຮັບການເຂົ້າຢ້ຽມຂໍ່ານັບຄະນະຜູ້ວ່າການ ທຫລ ຈາກສະພາທຸລະກິດອາເມລິກາ ອາຊຽນ (US-ASEAN Bussiness Council).

ຫົວໜ້າຫ້ອງການ

ຫ້ອງການ

ເພັດສະຖາພອນ ແກ້ວວົງວິຈິດ